# ການປົກປ້ອງ ແລະ ຮັກສາ ຄວາມປອດໄພ ສຳລັບເດັກ

## ສິ່ງທີ່ຄວນເຮັດ ແລະ ສິ່ງທີ່ຫ້າມເຮັດ



### ສຳລັບຜູ້ເຮັດວຽກສຶກສານິເທດພາຍໃນ



# ພາບລວມ


ພາກນຳສະເໜີ 5

ການກົດຂີ່ຂົ່ມເຫັງ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດ 6

ການເຄົາລົບສິດທິເດັກດ້ານຄວາມປອດໄພ ແລະ ການຮຽນຮ່ວມ 8

ການຄຸ້ມຄອງຄວາມປະພຶດຂອງເດັກນ້ອຍ 11

ການສື່ສານກັບເດັກນ້ອຍ 12

ການຖ່າຍຮູບ ຫຼື ຖ່າຍວິດີໂອເດັກນ້ອຍ 14

ການສື່ສານແບບອີເລັກໂຕຣນິກ ຫຼື ແບບອອນລາຍ 16

ການນຳໃຊ້, ການມີຢູ່ໃນຄອບຄອງ ຫຼື ການເອົາເຫຼົ້າ,
ຢາເສບຕິດ ແລະ ຢາປະເພດອື່ນໆໃຫ້ເດັກນ້ອຍ 17

ຄູ່ມືແນະນຳນີ້ ແມ່ນກ່ຽວກັບພາລະບົດບາດສ່ວນບຸກຄົນຂອງທ່ານ ໃນການຮັບປະກັນໃຫ້ເດັກນ້ອຍໝົດທຸກຄົນ ສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບ, ຢູ່ໃນສະພາບແວດລ້ອມຂອງການຮຽນຮ່ວມ ທີ່ສະໜັບສະໜູນການເຕີບໃຫຍ່ຂອງພວກເຂົາໄດ້ຢ່າງປອດໄພ.



## ການປົກປ້ອງ ແລະ ການຮັກສາຄວາມປອດໄພ ສຳລັບເດັກນ້ອຍ ແມ່ນຄວາມຮັບຜິດຊອບຂອງໝົດທຸກຄົນ.

# ພາກນຳສະເໜີ

ກົດໝາຍຂອງ ສປປ ລາວ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ ໄດ້ກຳນົດກ່ຽວກັບບັນດາຫຼັກການ, ລະບຽບ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງກັບການບໍລິຫານ, ການຕິດຕາມ ແລະ ການກວດກາການຈັດຕັ້ງປະຕິບັດ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍໃນຫຼາຍຊົນເຜົ່າ, ໃນນີ້ປະກອບມີມາດຕະການຕ່າງໆ ຕໍ່ຜູ້ກະທຳຜິດກັບເດັກນ້ອຍ. ກົດໝາຍທີ່ມີຢູ່ເພື່ອຮັບປະກັນວ່າ ເດັກນ້ອຍມີຄວາມສົມບູນທັງທາງດ້ານຮ່າງກາຍ, ຈິດໃຈ ແລະ ຈິດວິນຍານ ແລະ ມີທັດສະນະຄະຕິທີ່ດີ, ມີຄວາມຮູ້ ແລະ ຄວາມສາມາດ ແລະ ສາມາດມີຊີວິດທີ່ດີໃນສັງຄົມ ແລະ ກາຍເປັນຜູ້ສືບທອດທີ່ດີຂອງປະເທດຊາດ.

**ຄູ່ມືແນະນຳດັ່ງກ່າວນີ້ ແມ່ນມີຄວາມກ່ຽວຂ້ອງກັບຜູ້ເຮັດວຽກສຶກສານິເທດພາຍໃນ ຍ້ອນວ່າ:**

- ພວກທ່ານ ມີການສື່ສານໂດຍກົງກັບເດັກນ້ອຍ, ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກໃນຄອບຄົວຂອງເດັກນ້ອຍ ຢູ່ໃນໂຮງຮຽນຂອງພວກເຂົາທຸກມື້.
- ພວກທ່ານ ມີການສື່ສານໃນທາງກົງ ແລະ ທາງອ້ອມກັບເດັກນ້ອຍ, ພໍ່ແມ່ຜູ້ປົກຄອງ ແລະ ສະມາຊິກໃນຄອບຄົວຂອງເດັກນ້ອຍ ຢູ່ໃນໂຮງຮຽນທີ່ພວກທ່ານໃຫ້ການສະໜັບສະໜູນ.
- ຄຳແນະນຳ ແລະ ການສະໜັບສະໜູນຂອງຜູ້ເຮັດວຽກສຶກສານິເທດພາຍໃນ ທີ່ສະໜອງໃຫ້ແກ່ຄູສອນ, ຜູ້ອຳນວຍການ ແລະ ສະມາຊິກຊຸມຊົນຂອງໂຮງຮຽນ ແມ່ນພາລະບົດບາດ ແລະ ໜ້າວຽກຂອງພວກທ່ານ.



# ການກີດຂີ່ຂົ່ມເຫັງ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດ

**'*ການປະພຶດທາງເພດ*' ບໍ່ວ່າໃນຮູບແບບໃດ ເກີດຂຶ້ນໃນຕົວຈິງ ຫຼື ແບບອອນລາຍ ລ້ວນແຕ່ເປັນສິ່ງທີ່ບໍ່ສາມາດຍອມຮັບໄດ້ຢ່າງເດັດຂາດ. ຕົວຢ່າງ:**

- ລະຫວ່າງຜູ້ໃຫຍ່ ແລະ ເດັກນ້ອຍ.
- ລະຫວ່າງເດັກນ້ອຍນຳກັນ.
- ເກີດຂຶ້ນຕໍ່ໜ້າເດັກນ້ອຍຄົນໃດໜຶ່ງ ຫຼື ເດັກນ້ອຍຫຼາຍຄົນ.

**ການປະພຶດທາງເພດຕ່າງໆ, ແຕ່ກໍ່ບໍ່ໄດ້ຈຳກັດຂອບເຂດ ດັ່ງດ້ານລຸ່ມນີ້:**

- ການຮ່ວມເພດ.
- ການຈູບ.
- ການລູບຄຳ.
- ການລົມໃນທາງຊູ້ສາວ.
- ການດູຖູກທາງເພດ.
- ການສົ່ງຂໍ້ຄວາມທີ່ບໍ່ເໝາະສົມ.
- ຮູບຖ່າຍທີ່ບໍ່ເໝາະສົມ.
- ການເປີດເຜີຍຮູບພາບລາມົກ ຫຼື ຮູບພາບໂປ້ເປືອຍ.

## ສິ່ງທີ່ຫ້າມເຮັດ

- ຫ້າມມີພຶດຕິກຳທາງເພດກັບເດັກນ້ອຍ.
- ຫ້າມມີພຶດຕິກຳທາງເພດໃນເວລາມີເດັກນ້ອຍຄົນໃດໜຶ່ງຢູ່ນຳ ເຊິ່ງຈະເຮັດໃຫ້ພວກເຂົາຮູ້ສຶກບໍ່ພໍໃຈ, ອັບອາຍ ຫຼື ຖືກຂົ່ມຂູ່.
- ຫ້າມແກ້ເຄື່ອງຕໍ່ໜ້າເດັກນ້ອຍ ຫຼື ເປີດເຜີຍຮ່າງກາຍຂອງທ່ານ ໃນຮູບແບບໃດກໍຕາມຕໍ່ໜ້າເດັກນ້ອຍ.
- ຫ້າມລົມໃນທາງຊູ້ສາວກັບເດັກນ້ອຍ ຫຼື ໃຫ້ຄຳເຫັນໃນລັກສະນະຊີ້ນຳໄປທາງເພດກັບເດັກນ້ອຍ.
- ຫ້າມມີການສົນທະນາກ່ຽວກັບເລື່ອງເພດໃນຮູບແບບທີ່ບໍ່ເໝາະສົມກັບເດັກນ້ອຍ (ຕົວຢ່າງ: ຖາມພວກເຂົາກ່ຽວກັບເລື່ອງເພດຂອງພວກເຂົາ ຫຼື ປະສົບການກ່ຽວກັບການປະພຶດທາງເພດ).
- ຫ້າມເວົ້າຕະຫຼົກກ່ຽວກັບເລື່ອງເພດ.




# ຢ່າເຮັດເມີນເສີຍ!

ການເຮັດມິດງຽບ ຈະເປັນການສົ່ງຂໍ້ຄວາມວ່າ ທ່ານຍອມຮັບໄດ້ກ່ຽວກັບການກົດຂີ່ຂົ່ມເຫັງ, ການຄຸກຄາມ ແລະ ການລ່ວງລະເມີດທາງເພດກັບເດັກນ້ອຍ ບໍ່ວ່າຈະຢູ່ໃນໂຮງຮຽນຂອງທ່ານເອງ ຫຼື ຢູ່ໃນໂຮງຮຽນໃດໜຶ່ງທີ່ທ່ານກຳລັງໃຫ້ການສະໜັບສະໜູນ.

*ຖ້າທ່ານພົບເຫັນການປະພຶດທາງເພດຕ່າງໆຕໍ່ກັບເດັກນ້ອຍ, ກະລຸນາແຈ້ງໄປທີ່ສາຍດ່ວນສຳລັບການປົກປ້ອງເດັກຢູ່ໃນແຂວງຂອງທ່ານ (ສາມາດເບິ່ງລາຍຊື່ແຂວງ ແລະ ເບີໂທໃນໜ້າທີ 18).*

# ການເຄົາລົບສິດທິເດັກ ດ້ານຄວາມປອດໄພ ແລະ ການຮຽນຮ່ວມ

ຈຸດເນັ້ນໜັກຂອງພາລະບົດບາດການເປັນຜູ້ໃຫ້ການຊ່ວຍເຫຼືອດ້ານນິເທດພາຍໃນຂອງທ່ານ ແມ່ນໃຫ້ການສະໜັບສະໜູນຄູສອນ ເພື່ອໃຫ້ພວກເຂົາສາມາດໃຫ້ການສະໜັບສະໜູນນັກຮຽນຂອງພວກເຂົາ ເພື່ອສາມາດບັນລຸຜົນການຮຽນທີ່ຄາດຫວັງໄວ້ໃນຊ່ວງອາຍຸ, ຂັ້ນຮຽນ ແລະ ທັກສະຄວາມສາມາດຂອງພວກເຂົາ.

ພາລະບົດບາດດັ່ງກ່າວລວມເຖິງການຊ່ວຍເຫຼືອຄູໃຫ້ມີຄວາມສາມາດໃນການກຳນົດ ແລະ ຕອບສະໜອງຕໍ່ຄວາມຕ້ອງການໃນການຮຽນຮູ້ຂອງນັກຮຽນທຸກຄົນ ໂດຍມີການເຄົາລົບສິດທິ ແລະ ກຽດສັກສີຂອງເດັກນ້ອຍແຕ່ລະຄົນ.

ໃນບາງຄັ້ງ ພາລະບົດບາດຂອງທ່ານອາດລວມໄປເຖິງການພົວພັນກັບນັກຮຽນ ເພື່ອສາທິດໃຫ້ເຫັນວ່າ ການສອນແບບຮຽນຮ່ວມສາມາດຊ່ວຍໃຫ້ເດັກນ້ອຍຮຽນຮູ້ ແລະ ເຕີບໃຫຍ່ ແລະ ເພື່ອສະແດງຄວາມເຄົາລົບໃນຄວາມສາມາດ ແລະ ສັກກະຍະພາບ ທີ່ຫຼາກຫຼາຍຂອງພວກເຂົາ.

## ✓ ສິ່ງທີ່ຄວນເຮັດ

- ປະຕິບັດກັບເດັກນ້ອຍທຸກຄົນເທົ່າທຽມກັນ ໂດຍບໍ່ຄຳນຶງເຖິງເລື່ອງເພດ, ຊົນເຜົ່າ, ລະດັບການຮຽນຮູ້ ຫຼື ຄວາມສາມາດຂອງພວກເຂົາ.
- ສະໜັບສະໜູນຄູຢ່າງຕັ້ງໜ້າ ເພື່ອໃຫ້ຄູມີຄວາມເຂົ້າໃຈກ່ຽວກັບສິ່ງກີດຂວາງຕ່າງໆ ທີ່ສົ່ງຜົນກະທົບຕໍ່ການເຂົ້າເຖິງການສຶກສາທີ່ມີຄຸນນະພາບຢ່າງເທົ່າທຽມ ແລະ ໃຫ້ຄຳແນະນຳທີ່ຄູສາມາດປະຕິບັດໄດ້ ກ່ຽວກັບວິທີການກຳຈັດບັນດາສິ່ງກີດຂວາງດັ່ງກ່າວ.
- ເຮັດໃຫ້ເດັກນ້ອຍຮັບຮູ້ວ່າ ທ່ານເປັນຄົນຈາກພາຍນອກໂຮງຮຽນ/ຊຸມຊົນຂອງພວກເຂົາ ທີ່ມາເພື່ອໃຫ້ການສະໜັບສະໜູນໂຮງຮຽນ ແລະ ຄູສອນຂອງພວກເຂົາ.
- ຕະຫຼອດໄລຍະເວລາທີ່ຢູ່ໃນໂຮງຮຽນ ເປັນຕົວແບບການປົກປ້ອງ ແລະ ຮັກສາຄວາມປອດໄພຂອງເດັກນ້ອຍທີ່ມີມາດຕະຖານສູງ ສຳລັບຊຸມຊົນຂອງໂຮງຮຽນໂດຍອີງໃສ່ຂໍ້ມູນທີ່ຢູ່ໃນຄູ່ມືແນະນຳນີ້.
- ຖ້າທ່ານສອບຖາມເດັກນ້ອຍ ກ່ຽວກັບສິ່ງຕ່າງໆ ຫຼື ຖ້າພວກເຂົາເລືອກທີ່ຈະເວົ້າເຖິງສິ່ງຕ່າງໆກັບທ່ານ, ທ່ານຕ້ອງໃຫ້ຄວາມເຄົາລົບຕໍ່ກັບຄວາມສົນໃຈ, ຄວາມຕ້ອງການ, ທັດສະນະຄະຕິ ແລະ ຄວາມກັງວົນຕ່າງໆຂອງເດັກນ້ອຍ.
- ຮັບປະກັນໃຫ້ພໍ່ແມ່ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວຂອງເດັກນ້ອຍຮູ້ວ່າ ທ່ານແມ່ນໃຜ, ຍ້ອນຫຍັງທ່ານຈຶ່ງມາຢ້ຽມຢາມໂຮງຮຽນດັ່ງກ່າວ ແລະ ຍ້ອນຫຍັງຈຶ່ງຕ້ອງເຊັນອະນຸຍາດໃຫ້ທ່ານສາມາດເຮັດວຽກກັບລູກຫຼານຂອງພວກເຂົາໄດ້ ຖ້າສິ່ງນັ້ນແມ່ນສ່ວນໜຶ່ງຂອງການໄປຢ້ຽມຢາມຊ່ວຍເຫຼືອຂອງທ່ານ.

# ສິ່ງທີ່ຫ້າມເຮັດ

- ຫ້າມໃຫ້ການຊ່ວຍເຫຼືອໃນຮູບແບບໃດໜຶ່ງແກ່ເດັກນ້ອຍ ຫຼື ສະມາຊິກໃນຄອບຄົວຂອງພວກເຂົາ ທີ່ບໍ່ກ່ຽວຂ້ອງກັບຂອບເຂດພາລະບົດບາດການເປັນຜູ້ໃຫ້ການຊ່ວຍເຫຼືອດ້ານນິເທດພາຍໃນຂອງທ່ານ ຖ້າທ່ານບໍ່ໄດ້ມີສາຍພົວພັນທາງດ້ານສັງຄົມ, ທາງສ່ວນຕົວ ຫຼື ທາງຄອບຄົວກັບພວກເຂົາມາກ່ອນ. ຕົວຢ່າງ: ການຊ່ວຍເຫຼືອດ້ານການເງິນ, ການເບິ່ງແຍງ ຫຼື ດູແລເດັກນ້ອຍ, ການຊ່ວຍເຫຼືອດ້ານພາຫະນະໃນການເດີນທາງ ຫຼື ດ້ານທີ່ພັກຕ່າງໆ.
- ຫ້າມໃຫ້ການຊ່ວຍເຫຼືອດ້ານພາຫະນະໃນການເດີນທາງແກ່ເດັກນ້ອຍ ຫຼື ເດີນທາງຮ່ວມກັບເດັກນ້ອຍ ນອກຈາກວ່າທ່ານໄດ້ຮັບອະນຸມັດສະເພາະດັ່ງກ່າວຈາກພໍ່ແມ່ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວ ທີ່ມີສິດເບິ່ງແຍງທາງດ້ານກົດໝາຍຂອງເດັກນ້ອຍ.
- ຫ້າມພັດທະນາສາຍພົວພັນແບບພິເສດກັບເດັກນ້ອຍທີ່ອາດຈະຖືວ່າເປັນການເບິ່ງແຍງເປັນພິເສດ ຫຼື ເກີນກວ່າຄົນອື່ນ.
- ຫ້າມໃຫ້ຂອງຂວັນສ່ວນຕົວ ຫຼື ປະຕິບັດແບບພິເສດ ຕໍ່ກັບເດັກນ້ອຍທີ່ນອກເໜືອຈາກຂອງລາງວັນທີ່ໃຫ້ແບບທາງການ ທີ່ພົວພັນເຖິງພາລະບົດບາດການເປັນຜູ້ເຮັດວຽກສຶກສານິເທດພາຍໃນຂອງທ່ານ.
- ຫ້າມເປີດເຜີຍ ຫຼື ແບ່ງປັນຂໍ້ມູນ ສ່ວນຕົວຂອງທ່ານຕໍ່ເດັກນ້ອຍ (ເຊັ່ນ: ຂໍ້ມູນດ້ານການເງິນສ່ວນຕົວ ຫຼື ຂໍ້ມູນກ່ຽວກັບສາຍພົວພັນສ່ວນຕົວ).
- ຫ້າມບອກໃຫ້ເດັກນ້ອຍຮັກສາຄວາມລັບ ເຊັ່ນ: ບອກພວກເຂົາບໍ່ໃຫ້ບອກພໍ່ແມ່ຜູ້ປົກຄອງ ຫຼື ຄູສອນຂອງພວກເຂົາ ກ່ຽວກັບຫົວຂໍ້ຕ່າງໆທີ່ທ່ານໄດ້ສົນທະນາກັບພວກເຂົາ.
- ຫ້າມປະຕິບັດກັບເດັກນ້ອຍຄືກັບຜູ້ໃຫຍ່, ເຖິງແມ່ນວ່າພວກເຂົາຈະເບິ່ງຄືເປັນຜູ້ໃຫຍ່ ແລະ ໄດ້ຮັບການມອບໝາຍຄວາມຮັບຜິດຊອບຂອງຜູ້ໃຫຍ່ຢູ່ພາຍໃນຄອບຄົວຂອງພວກເຂົາກໍ່ຕາມ.
- ຫ້າມສ້າງໃຫ້ຕົນເອງເປັນທີ່ເພິ່ງທາງດ້ານອາລົມຂອງເດັກ ຕົວຢ່າງ: ໃຫ້ການຊ່ວຍເຫຼືອດ້ານອາລົມແທນໝູ່, ຄູ ແລະ ສະມາຊິກໃນຄອບຄົວຂອງເດັກ.

**ສ່ວນຫຼາຍແລ້ວ, ການກະທຳເຫຼົ່ານີ້ ແມ່ນເຮັດໄປດ້ວຍຄວາມປາຖະໜາດີ; ແຕ່ມັນກໍ່ຖືວ່າບໍ່ປອດໄພ ທີ່ການຊ່ວຍເຫຼືອແມ່ນມາຈາກບຸກຄົນທີ່ບໍ່ສາມາດຮັບປະກັນໄດ້ວ່າຈະເປັນຜູ້ຊ່ວຍເຫຼືອຢ່າງສະໝໍ່າສະເໝີໃນໄລຍະຍາວໃນຊີວິດຂອງເດັກນ້ອຍ.**

**ຖ້າທ່ານຮັບຮູ້ໄດ້ວ່າເດັກຕ້ອງການການຊ່ວຍເຫຼືອ, ທາງທີ່ດີທີ່ສຸດທີ່ທ່ານຈະສາມາດເຮັດໄດ້ ແມ່ນການຊອກຫາວິທີແກ້ໄຂທີ່ຍືນຍົງໃນໄລຍະຍາວ.**

**ຖ້າເຫັນວ່າມີຄວາມຈຳເປັນທີ່ທ່ານຕ້ອງໃຫ້ການຊ່ວຍເຫຼືອທັນທີໃນໄລຍະສັ້ນ, ທ່ານສາມາດໃຫ້ການຊ່ວຍເຫຼືອນັ້ນໄດ້ແຕ່ກໍ່ຕ້ອງຮັບປະກັນໃຫ້ມີແຜນການໄລຍະຍາວ ທີ່ບໍ່ຈຳເປັນຕ້ອງມີການຊ່ວຍເຫຼືອຈາກທ່ານ.**



# ການຄຸ້ມຄອງຄວາມປະພຶດຂອງເດັກນ້ອຍ

ຜູ້ເຮັດວຽກສຶກສານິເທດພາຍໃນ ຄວນປະຕິບັດຕົວເປັນແບບຢ່າງ ໃນໂຮງຮຽນທີ່ຕົນເອງສອນ ແລະ ໂຮງຮຽນທີ່ຕົນເອງໃຫ້ການຊ່ວຍເຫຼືອທາງດ້ານຍຸດທະສາດ ເພື່ອເປັນການສົ່ງເສີມ ແລະ ຊຸກຍູ້ໃຫ້ນັກຮຽນມີການປະພຶດທີ່ດີ. ເມື່ອນັກຮຽນມີການປະພຶດທີ່ບໍ່ດີ, ການໃສ່ລະບຽບນັກຮຽນ **ແມ່ນຫ້າມເດັດຂາດ** ບໍ່ໃຫ້ລົງໂທດທາງດ້ານຮ່າງກາຍ (ເຊັ່ນ: ການຕີດ້ວຍໄມ້ແສ້ ຫຼື ຕົບຕີເດັກນ້ອຍ). ຜູ້ເຮັດວຽກສຶກສານິເທດພາຍໃນ ຄວນໃຫ້ການຊ່ວຍເຫຼືອຄູ ຢູ່ໃນໂຮງຮຽນທີ່ຕົນເອງສອນ ແລະ ຢູ່ໃນໂຮງຮຽນທີ່ຕົນເອງໃຫ້ການຊ່ວຍເຫຼືອ ເພື່ອຮັບປະກັນໃຫ້ໂຮງຮຽນເປັນບ່ອນທີ່ມີຄວາມປອດໄພ ແລະ ມີການຮຽນຮ່ວມ.

## ສິ່ງທີ່ຄວນເຮັດ

- ແລກປ່ຽນກັບຄູ ກ່ຽວກັບວິທີການ ທີ່ເປັນການໃຫ້ລາງວັນ ແລະ ຊຸກຍູ້ໃຫ້ເກີດມີການປະພຶດທີ່ດີ ແລະ ຄ່ອຍໆຫຼຸດຜ່ອນການປະພຶດທີ່ບໍ່ດີຕ່າງໆ.
- ກຳນົດຄຳແນະນຳທີ່ຊັດເຈນ ສຳລັບການປະພຶດທີ່ຄາດຫວັງໄວ້ກັບເດັກນ້ອຍ.
- ໃຫ້ຄຳແນະນຳ ທີ່ບໍ່ໃຊ້ຄວາມຮຸນແຮງ, ເນັ້ນໃສ່ການແກ້ໄຂບັນຫາ ແລະ ໃຫ້ຄວາມເຄົາລົບ ແລະ ສອດຄ່ອງກັບບັນດາຫຼັກການທີ່ກ່ຽວກັບພັດທະນາການຂອງເດັກນ້ອຍ.
- ແກ້ໄຂການປະພຶດທີ່ບໍ່ດີ ດ້ວຍວິທີການທີ່ສຸຂຸມ ແລະ ໜັກແໜ້ນ.
- ຊ່ວຍເດັກນ້ອຍໃຫ້ປະພຶດຕາມກົດລະບຽບຕ່າງໆ ທີ່ໄດ້ກຳນົດຂຶ້ນ.
- ສ້າງໃຫ້ມີ **'ເຂດປອດໄພ'** ສຳລັບເດັກນ້ອຍ ເພື່ອໃຫ້ເດັກສາມາດສະແດງຄວາມຮູ້ສຶກອອກມາໃນເວລາທີ່ພວກເຂົາຮູ້ສຶກບໍ່ປອດໄພ.
- ຊຸກຍູ້ໃຫ້ເດັກນ້ອຍສົນທະນາ ກ່ຽວກັບຄວາມຮູ້ສຶກຂອງພວກເຂົາ ແລະ ເຫດຜົນຕ່າງໆ ທີ່ເຮັດໃຫ້ພວກເຂົາຮູ້ສຶກເຊັ່ນນັ້ນ.

## ສິ່ງທີ່ຫ້າມເຮັດ

- ຫ້າມໃສ່ລະບຽບ ຫຼື ລົງໂທດ ໃນຮູບແບບໃດໜຶ່ງ ທີ່ເຮັດໃຫ້ເດັກນ້ອຍຮູ້ສຶກເຈັບ ຫຼື ບໍ່ສະບາຍທາງດ້ານຮ່າງກາຍ.
- ຫ້າມແຍກເດັກນ້ອຍຄົນໃດໜຶ່ງ ອອກຈາກນັກຮຽນຄົນອື່ນໆໃນຫ້ອງ ເພື່ອເປັນການລົງໂທດ.
- ຫ້າມການລົງໂທດໃນຮູບແບບໃດໜຶ່ງ ທີ່ເຮັດໃຫ້ເກີດຄວາມອັບອາຍ, ທີ່ໂຫດຮ້າຍ ຫຼື ເຮັດໃຫ້ເກີດຄວາມຢ້ານກົວ.

# ການສື່ສານກັບເດັກນ້ອຍ

ເມື່ອພາລະບົດບາດການເປັນຜູ້ໃຫ້ການຊ່ວຍເຫຼືອດ້ານນິເທດພາຍໃນຂອງທ່ານ ຕ້ອງໄດ້ມີການພົວພັນກັບເດັກນ້ອຍ, ຄຳສັບ ແລະ ນ້ຳສຽງທີ່ທ່ານໃຊ້ ແມ່ນມີຄວາມສຳຄັນຫຼາຍ.

ຜູ້ເຮັດວຽກສຶກສານິເທດພາຍໃນ ຕ້ອງເປັນແບບຢ່າງທີ່ດີ ໃນວິທີການສື່ສານກັບເດັກນ້ອຍ ໃນລັກສະນະທີ່ໃຫ້ຄຳແນະນຳທີ່ກະຈ່າງແຈ້ງ, ເສີມສ້າງຄວາມໝັ້ນໃຈຂອງພວກເຂົາ, ຊຸກຍູ້ສິ່ງເສີມ ແລະ ສະໜັບສະໜູນພັດທະນາການຂອງພວກເຂົາ ແລະ ສິ່ງສຳຄັນທີ່ສຸດແມ່ນ: **ບໍ່ກໍ່ໃຫ້ເກີດຄວາມເສຍຫາຍ ບໍ່ວ່າທາງກົງ ຫຼື ທາງອ້ອມ**.



## ສິ່ງທີ່ຄວນເຮັດ

- ໃຊ້ພາສາທີ່ຈະແຈ້ງ, ກົງໄປກົງມາ ແລະ ເໝາະສົມກັບຊ່ວງອາຍຸຂອງເດັກ.
- ໃຊ້ຄໍາສັບ, ນໍ້າສຽງ, ການສະແດງອອກທາງສີໜ້າ ແລະ ທ່າທາງຂອງຮ່າງກາຍ ເພື່ອສື່ສານອອກໄປດ້ວຍຄວາມສຸຂຸມ ແລະ ໃຫ້ກຽດເດັກ.
- ສຸມໃສ່ການປະພຶດໃນທາງທີ່ດີຂອງເດັກນ້ອຍ ເພື່ອເສີມສ້າງຄວາມໝັ້ນໃຈໃຫ້ແກ່ເຂົາເຈົ້າ ລວມທັງທັກສະຄວາມສາມາດຕ່າງໆ.
- ໃຊ້ພາສາທີ່ເປັນການຊຸກຍູ້ ແລະ ສະໜັບສະໜູນ ແລະ ພາສາທີ່ເປັນການສ້າງສະພາບແວດລ້ອມຂອງການຮຽນຮ່ວມ ແລະ ມີຄວາມມ່ວນຊື່ນ.
- ທັກທ້ວງໃນສະຖານະການ ທີ່ເຫັນວ່າ ຄູ, ພໍ່ແມ່/ຜູ້ປົກຄອງ, ເດັກນ້ອຍ ຫຼື ຄົນອື່ນໆນໍາໃຊ້ພາສາດ້ານລົບ ແລະ ສໍານຽງທີ່ບໍ່ເໝາະສົມ ແລະ ຊີ້ແຈງໃຫ້ຮູ້ວ່າ ນັ້ນແມ່ນສິ່ງທີ່ບໍ່ເໝາະສົມ.
- ຫ້າວຫັນໃນການເຮັດວຽກກັບຄູ ແລະ ຜູ້ອໍານວຍການ ທີ່ທ່ານກໍາລັງໃຫ້ການຊ່ວຍເຫຼືອ ເພື່ອໃຫ້ເຂົາເຈົ້າສື່ສານໃນທາງທີ່ດີກັບເດັກນ້ອຍ ໂດຍອີງໃສ່ຄູ່ມືແນະນໍາສະບັບນີ້.
- ລາຍງານເລື່ອງ X ໃຫ້ແກ່ Y ຖ້າທ່ານສັງເກດເຫັນວ່າ ມີຮູບແບບການສື່ສານທີ່ເກີດຂຶ້ນເປັນປົກກະຕິ ໃນທາງທີ່ບໍ່ໃຫ້ກຽດ, ບໍ່ເໝາະສົມ ຫຼື ເປັນອັນຕະລາຍ ລະຫວ່າງຜູ້ໃຫຍ່ ແລະ ເດັກນ້ອຍຢູ່ໃນໂຮງຮຽນທີ່ທ່ານກໍາລັງໃຫ້ການສະໜັບສະໜູນຢູ່.
- ລາຍງານເລື່ອງ X ໃຫ້ແກ່ Y ຖ້າທ່ານສັງເກດເຫັນວ່າ ມີຮູບແບບການສື່ສານທີ່ເກີດຂຶ້ນເປັນປົກກະຕິ ລະຫວ່າງເດັກນ້ອຍກັບເດັກນ້ອຍ ໃນທາງທີ່ບໍ່ໃຫ້ກຽດກັນ ຫຼື ບໍ່ເໝາະສົມ ໃນໂຮງຮຽນທີ່ທ່ານກໍາລັງໃຫ້ການສະໜັບສະໜູນຢູ່ເຊິ່ງຜູ້ໃຫຍ່ທ່ານອື່ນໆບໍ່ໄດ້ພະຍາຍາມແກ້ໄຂບັນຫາເຫຼົ່ານີ້.

## ສິ່ງທີ່ຫ້າມເຮັດ

- ຫ້າມໃຊ້ຄວາມຄິດແບບຄອງເດີມ, ອັກຈູງ ຫຼື ສຽດສີ ເມື່ອສື່ສານກັບເດັກນ້ອຍ.
- ຫ້າມເຮັດໃຫ້ເດັກນ້ອຍເກີດຄວາມອັບອາຍ ຫຼື ມີການໃຊ້ຄໍາເຫັນທີ່ເຮັດໃຫ້ເສື່ອມເສຍ ຫຼື ເປັນການດູຖູກ (ຕົວຢ່າງ: ເອີ້ນເດັກນ້ອຍດ້ວຍຊື່ຂອງຊົນເຜົ່າ, ລະດັບການຮຽນຮູ້ ຫຼື ຄວາມພິການ).
- ຫ້າມໃຊ້ທ່າທາງ ແລະ ພາສາທີ່ອະນາຈານ.
- ຫ້າມເຮັດໃຫ້ເດັກນ້ອຍອັບອາຍ, ມີການຂົ່ມຂູ່ ຫຼື ມີການຕໍານິເດັກນ້ອຍເປັນປະຈໍາ.
- ຫ້າມອະນຸຍາດໃຫ້ເດັກນ້ອຍໃຊ້ພາສາທີ່ບໍ່ເໝາະສົມໂດຍບໍ່ມີການຫ້າມປາມ ບໍ່ວ່າຈະຕໍ່ກັບຜູ້ໃຫຍ່ ຫຼື ກັບເດັກນ້ອຍຄົນອື່ນໆ.
- ຫ້າມແຍກເດັກນ້ອຍຄົນໜຶ່ງອອກຈາກໝູ່ ຫຼື ດູຖູກພວກເຂົາຕໍ່ໜ້າໝູ່ ຫຼື ສະມາຊິກຄົນອື່ນໆ.
- ຫ້າມອະນຸຍາດໃຫ້ຄູສອນຄົນໃດໜຶ່ງ ໃນໂຮງຮຽນທີ່ທ່ານກໍາລັງໃຫ້ການສະໜັບສະໜູນ ເຮັດສິ່ງຕ່າງໆທີ່ກ່າວມາຂ້າງເທິງໂດຍບໍ່ມີການຫ້າມປາມ.

# ການຖ່າຍຮູບ ຫຼື ຖ່າຍວິດີໂອ ເດັກນ້ອຍ

**ຫ້າມເດັດຂາດບໍ່ໃຫ້** ຖ່າຍຮູບ ຫຼື ຖ່າຍວິດີໂອ ເດັກນ້ອຍໃນໂຮງຮຽນຂອງທ່ານ ຫຼື ໃນໂຮງຮຽນ ທີ່ທ່ານກຳລັງໃຫ້ການສະໜັບສະໜູນ ຖ້າບໍ່ມີການຕົກລົງເຫັນດີຂອງພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກຄອບຄົວຂອງເດັກນ້ອຍ ແລະ ເດັກນ້ອຍເອງກໍ່ຕ້ອງ ມີ**ຄວາມເຕັມໃຈ** ທີ່ຈະເຂົ້າຮ່ວມ.

## ✓ ສິ່ງທີ່ຄວນເຮັດ

- ຂໍອະນຸຍາດໃຫ້ໄດ້ຮັບການເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກນ້ອຍກ່ອນທີ່ທ່ານຈະຖ່າຍຮູບ ຫຼື ຖ່າຍວິດີໂອເດັກນ້ອຍ. ຕ້ອງຂໍອະນຸຍາດຈາກພໍ່ແມ່ຜູ້ປົກຄອງຂອງເດັກນ້ອຍແຕ່ລະຄົນທີ່ຈະຢູ່ໃນຮູບພາບ ຫຼື ວິດີໂອ ທີ່ທ່ານຈະຖ່າຍ. ອະທິບາຍໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກຮັບຮູ້ວ່າພວກເຂົາມີສິດທີ່ຈະປະຕິເສດຄຳຂໍດັ່ງກ່າວນີ້ໄດ້.
- ອະທິບາຍໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກນ້ອຍຮັບຮູ້ກ່ຽວກັບຈຸດປະສົງຂອງການຖ່າຍຮູບ ຫຼື ຖ່າຍວິດີໂອ ແລະ ແຈ້ງໃຫ້ຮູ້ວ່າທ່ານຈະໃຊ້ຮູບພາບ ຫຼື ວິດີໂອ ດັ່ງກ່າວແບບໃດ (ຕົວຢ່າງ: ຈະຖືກນຳໃຊ້ໃນສື່ອອນລາຍ, ສື່ສິ່ງພິມ ຫຼື ນຳໃຊ້ເຂົ້າໃນສື່ການສອນ ຫຼື ສື່ໂຄສະນາຕ່າງໆ).
- ອະທິບາຍໃຫ້ພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກຮັບຮູ້ວ່າ ເມື່ອຮູບຖ່າຍຖືກເຜີຍແຜ່ອອກໄປແລ້ວ ທ່ານຈະບໍ່ສາມາດລຶບອອກໄດ້.
- ກ່ອນທີ່ທ່ານຈະຖ່າຍຮູບ ຫຼື ຖ່າຍວິດີໂອເດັກນ້ອຍ, ທ່ານຕ້ອງຖາມພວກເຂົາກ່ອນວ່າພວກເຂົາຍິນດີທີ່ຈະຢູ່ໃນຮູບພາບ ຫຼື ວິດີໂອດັ່ງກ່າວບໍ່.
- ຕ້ອງຢຸດຖ່າຍຮູບ ຫຼື ຖ່າຍວິດີໂອ ເດັກນ້ອຍໃນທັນທີ ຖ້າເຫັນວ່າເຂົາເຈົ້າບໍ່ພໍໃຈ, ອາຍ ຫຼື ບໍ່ເຕັມໃຈ.
- ໃນຮູບພາບ ຫຼື ວິດີໂອ ທີ່ທ່ານຖ່າຍຕ້ອງຮັບປະກັນວ່າບໍ່ມີຂໍ້ມູນທີ່ສາມາດລະບຸຕົວຕົນຂອງເດັກ ແລະ ສະຖານທີ່ ທີ່ເດັກອາໄສຢູ່. ຕົວຢ່າງ: ຕ້ອງຮັບປະກັນບໍ່ໃຫ້ເດັກນ້ອຍໃສ່ປ້າຍຊື່ຂອງພວກເຂົາ ແລະ ຫຼີກລ່ຽງບໍ່ໃຫ້ມີປ້າຍຕ່າງໆທີ່ອາດຈະເຮັດໃຫ້ຮູ້ໄດ້ວ່າໂຮງຮຽນດັ່ງກ່າວຕັ້ງຢູ່ບ່ອນໃດ.
- ຫຼີກລ່ຽງຮູບພາບທີ່ຈະເຮັດໃຫ້ເຫັນໃບໜ້າຂອງເດັກນ້ອຍຢ່າງຊັດເຈນ. ຕົວຢ່າງ: ໃຊ້ມຸມທີ່ບໍ່ສະແດງໃຫ້ເຫັນໃບໜ້າຂອງເດັກນ້ອຍໂດຍກົງ ຫຼື ຖ່າຍຮູບເດັກນ້ອຍເປັນກຸ່ມ ດ້ວຍໄລຍະໄກແທນທີ່ຈະເປັນການຖ່າຍຮູບພາບຂອງເດັກນ້ອຍຄົນໃດໜຶ່ງເປັນລາຍບຸກຄົນ.
- ຕ້ອງຮັບປະກັນວ່າທຸກຮູບພາບຂອງເດັກນ້ອຍນຳສະເໜີພາບຂອງເດັກນ້ອຍໃນແບບທີ່ດີ, ມີກຽດສັກສີ ແລະ ຖືກເຄົາລົບ. ໃຫ້ເນັ້ນໜັກໃສ່ຄວາມສາມາດ ແລະ ຜົນສຳເລັດຂອງພວກເຂົາ.




# ສິ່ງທີ່ຫ້າມເຮັດ

- ຫ້າມຍອມຮັບເອົາໃບອະນຸຍາດເຫັນດີຕາງໜ້າໃຫ້ເດັກນ້ອຍຈາກຜູ້ອຳນວຍການໂຮງຮຽນ ຫຼື ຄູ ເພື່ອຖ່າຍຮູບ ຫຼື ຖ່າຍວິດີໂອເດັກນ້ອຍ. ການອະນຸຍາດເຫັນດີຕ້ອງແມ່ນມາຈາກພໍ່ແມ່ ຫຼື ຜູ້ປົກຄອງທີ່ມີສິດທາງກົດໝາຍເທົ່ານັ້ນ.
- ຫ້າມຖ່າຍຮູບ ຫຼື ວິດີໂອ ທີ່ສະແດງໃຫ້ເຫັນເຖິງສາຍພົວພັນທີ່ບໍ່ເໝາະສົມ ລະຫວ່າງຜູ້ໃຫຍ່ ແລະ ເດັກນ້ອຍ.
- ຫ້າມຖ່າຍຮູບ ຫຼື ວິດີໂອ ທີ່ນຳສະເໜີພາບຂອງເດັກນ້ອຍໃນແບບເປັນການອານາຈານ; ຕົວຢ່າງ: ການໃສ່ເຄື່ອງ ຫຼື ເຮັດທ່າທາງທີ່ບໍ່ເໝາະສົມ.
- ຫ້າມຖ່າຍຮູບ ຫຼື ວິດີໂອ ທີ່ນຳສະເໜີເດັກນ້ອຍ ໃນສະຖານະການທີ່ບໍ່ປອດໄພ.
- ຫ້າມຖ່າຍຮູບ ຫຼື ວິດີໂອ ທີ່ອາດສື່ຄວາມໝາຍວ່າມີຄວາມຮຸນແຮງ ຫຼື ການຄຸກຄາມຕໍ່ກັບເດັກນ້ອຍ ຫຼື ລະຫວ່າງເດັກນ້ອຍນຳກັນ.
- ຫ້າມຖ່າຍຮູບ ຫຼື ວິດີໂອຂອງເດັກນ້ອຍ ເພື່ອເອົາໄປນຳໃຊ້ເປັນການສ່ວນຕົວ.
- ຫ້າມສະແດງຮູບພາບ ຫຼື ວິດີໂອຂອງເດັກນ້ອຍທາງອອນລາຍ ຫຼື ສົ່ງໃຫ້ຄົນອື່ນ, ຍົກເວັ້ນວ່າທ່ານໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງເດັກນ້ອຍ.
- ຫ້າມໃຫ້ເງິນ ຫຼື ຊົດເຊີຍໃນຮູບແບບໃດໜຶ່ງ ໃຫ້ແກ່ເດັກນ້ອຍ ຫຼື ພໍ່ແມ່/ຜູ້ປົກຄອງຂອງພວກເຂົາ ເພື່ອແລກປ່ຽນກັບການຖ່າຍຮູບ ຫຼື ຖ່າຍວິດີໂອເດັກນ້ອຍ.

# ການສື່ສານແບບອີເລັກໂຕຣນິກ ຫຼື ແບບອອນລາຍ

ເບິ່ງຄືວ່າຜູ້ເຮັດວຽກສຶກສານິເທດພາຍໃນ ອາດຈະບໍ່ຈຳເປັນຕ້ອງຕິດຕໍ່ກັບເດັກນ້ອຍໂດຍກົງຜ່ານການສື່ສານແບບອີເລັກໂຕຣນິກ ຫຼື ແບບອອນລາຍ. ເຖິງຢ່າງໃດກໍ່ຕາມ, ຖ້າມີຄວາມຈຳເປັນທີ່ຕ້ອງໄດ້ສອບຖາມ ຫຼື ຕິດຕໍ່ຫາເດັກນ້ອຍ ໃນຮູບແບບດັ່ງກ່າວ, ຜູ້ເຮັດວຽກສຶກສານິເທດພາຍໃນ ຄວນສື່ສານຜ່ານທາງພໍ່ແມ່ຜູ້ປົກຄອງ, ສະມາຊິກຄອບຄົວ ແລະ ຄູສອນຂອງພວກເຂົາ.

## ສິ່ງທີ່ຫ້າມເຮັດ

- ຫ້າມເປັນໝູ່ກັບເດັກນ້ອຍ ຕາມສື່ສັງຄົມອອນລາຍຕ່າງໆ.
- ຫ້າມສື່ສານແບບສ່ວນຕົວກັບເດັກນ້ອຍ ຜ່ານທາງໂທລະສັບ, ອີເມວ ຫຼື ສື່ສັງຄົມອອນລາຍ.
- ຫ້າມບອກໃຫ້ເດັກນ້ອຍ ປົກປິດເລື່ອງການສື່ສານແບບອອນລາຍໄວ້ເປັນຄວາມລັບ ແລະ ບໍ່ໃຫ້ບອກພໍ່ແມ່, ຜູ້ປົກຄອງ, ສະມາຊິກໃນຄອບຄົວ ຫຼື ຄົນອື່ນໆ.
- ຫ້າມໃຊ້ການສື່ສານແບບອີເລັກໂຕຣນິກ ເພື່ອຈັດກິດຈະກຳທາງສັງຄົມທີ່ບໍ່ໄດ້ຮັບອະນຸຍາດ ຫຼື ເພື່ອການຕິດຕໍ່ອື່ນໆ.



# ການນຳໃຊ້, ການມີຢູ່ໃນຄອບຄອງ ຫຼື ການເອົາເຫຼົ້າ, ຢາເສບຕິດ ແລະ ຢາປະເພດອື່ນໆໃຫ້ເດັກນ້ອຍ

ໃນເວລາປະຕິບັດໜ້າທີ່ ຢູ່ໃນໂຮງຮຽນຂອງຕົນເອງ ຫຼື ໂຮງຮຽນທີ່ທ່ານໃຫ້ການສະໜັບສະໜູນ, ຫ້າມເດັດຂາດບໍ່ໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນ ມີອາການມຶນເມົາຈາກທາດເຫຼົ້າ ຫຼື ຢາເສບຕິດຕ່າງໆ.

ຂໍ້ຫ້າມດັ່ງກ່າວນີ້ຖືກກຳນົດໄວ້ຢ່າງຊັດເຈນ ຢູ່ໃນ **ມາດຕາ 7.6 ຂອງຈັນຍາບັນຄູ - ການຮັກສາຄຸນສົມບັດ/ຈັນຍາບັນຂອງຄູສອນ.**

## ສິ່ງທີ່ຫ້າມເຮັດ

- ຫ້າມນຳໃຊ້, ມີຢູ່ໃນຄອບຄອງ ຫຼື ມີອາການມຶນເມົາຈາກທາດເຫຼົ້າ ຫຼື ຢາຜິດກົດໝາຍໃດໜຶ່ງ.
- ຫ້າມນຳໃຊ້ ຫຼື ມີອາການມຶນເມົາຈາກທາດເຫຼົ້າ ໃນເວລາເຮັດວຽກ ຫຼື ຢູ່ໃນເຂດສາທາລະນະ.
- ຫ້າມເອົາເຫຼົ້າ ຫຼື ຢາເສບຕິດໃຫ້ເດັກນ້ອຍ (ລວມທັງຢາສູບ).
- ຫ້າມເຮັດໃຫ້ອັບອາຍ, ຂົ່ມຂູ່ ຫຼື ຕຳນິເດັກນ້ອຍຄົນໃດໜຶ່ງຢູ່ເລື້ອຍໆ.
- ຫ້າມຈັດຫາເອົາຢາປົວພະຍາດໃຫ້ເດັກນ້ອຍ ເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດຈາກພໍ່ແມ່, ຜູ້ປົກຄອງ ຫຼື ສະມາຊິກໃນຄອບຄົວຂອງພວກເຂົາ.



# ຖ້າທ່ານພົບເຫັນການປະພຶດທາງເພດຕໍ່ກັບເດັກນ້ອຍ ຫຼື ພົບເຫັນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ກະລຸນາແຈ້ງໄປທີ່ສາຍດ່ວນສຳລັບການປົກປ້ອງເດັກຢູ່ໃນແຂວງຂອງທ່ານຕາມເບີດັ່ງລຸ່ມນີ້:

| | |
|---|---|
| » **ສາຍດ່ວນກະຊວງສຶກສາທິການ ແລະ ກິລາ** | **ໂທ 1520** |
| » **ສາຍດ່ວນເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ** | **ໂທ 1300** |
| » **ສາຍດ່ວນສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ** | **ໂທ 1362 ແລະ 021 771302-03** |

## ເບີໂທລະສັບຕິດຕໍ່ ສຳລັບສະຫະພັນແມ່ຍິງແຂວງ ແລະ ນະຄອນຫຼວງວຽງຈັນ

| | | | |
|---|---|---|---|
| 1. | ສະຫະພັນແມ່ຍິງ ນະຄອນຫຼວງວຽງຈັນ | 021 265264 | ສາຍດ່ວນ 137, 1361 |
| 2. | ສະຫະພັນແມ່ຍິງ ແຂວງ ວຽງຈັນ | 023 400209 | |
| 3. | ສະຫະພັນແມ່ຍິງ ແຂວງ ຊຽງຂວາງ | 061 312154 | |
| 4. | ສະຫະພັນແມ່ຍິງ ແຂວງ ໄຊສົມບູນ | 026 210015 | |
| 5. | ສະຫະພັນແມ່ຍິງ ແຂວງ ຫຼວງພະບາງ | 071 212171 | |
| 6. | ສະຫະພັນແມ່ຍິງ ແຂວງ ອຸດົມໄຊ | 081 312026 | |
| 7. | ສະຫະພັນແມ່ຍິງ ແຂວງ ບໍ່ແກ້ວ | 084 211015 | |
| 8. | ສະຫະພັນແມ່ຍິງ ແຂວງ ຫຼວງນ້ຳທາ | 086 312062 | |
| 9. | ສະຫະພັນແມ່ຍິງ ແຂວງ ໄຊຍະບູລີ | 074 211225 | |
| 10. | ສະຫະພັນແມ່ຍິງ ແຂວງ ຜົ້ງສາລີ | 088 870370 | |
| 11. | ສະຫະພັນແມ່ຍິງ ແຂວງ ຫົວພັນ | 064 312080 | |
| 12. | ສະຫະພັນແມ່ຍິງ ແຂວງ ບໍລິຄຳໄຊ | 054 280136 | |
| 13. | ສະຫະພັນແມ່ຍິງ ແຂວງ ຄຳມ່ວນ | 051 251298 | ສາຍດ່ວນ 136 |
| 14. | ສະຫະພັນແມ່ຍິງ ແຂວງ ສະຫວັນນະເຂດ | 041 212016 | |
| 15. | ສະຫະພັນແມ່ຍິງ ແຂວງ ຈຳປາສັກ | 031 212022 | |
| 16. | ສະຫະພັນແມ່ຍິງ ແຂວງ ສາລະວັນ | 034 211118 | |
| 17. | ສະຫະພັນແມ່ຍິງ ແຂວງ ເຊກອງ | 038 211046 | |
| 18. | ສະຫະພັນແມ່ຍິງ ແຂວງ ອັດຕະປື | 036 211074 | |



ທ່ານຄວນປະຕິບັດຄຳແນະນຳໃນຄູ່ມືສະບັບນີ້ກັບເດັກນ້ອຍ
ທີ່ຢູ່ໃນໂຮງຮຽນ ແລະ ຊຸມຊົນຂອງທ່ານ ພ້ອມທັງ
ໃນໂຮງຮຽນທີ່ທ່ານໃຫ້ການສະໜັບສະໜູນ.

ແຜນງານບົດອາ ແມ່ນແຜນງານທີ່ນຳພາໂດຍ ລັດຖະບານແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID